**P.D.D.P 2** ໂຄງການພັດທະນາ ຊົນນະບົດ ເມືອງຜົ້ງສາລີ

ຄ.ພ.ມ.ຜ 2 **PROJET DE DEVELOPPEMENT RURAL DU DISTRICT DE PHONGSALY**

# ຄູ່ມື

# ການປູກຕິບຕີ່



ໂດຍ : ຂະແໜງສົ່ງເສີມການປູກພືດເປັນສິນຄ້າ ແລະ ການຕະຫລາດ

ກໍລະກົດ 2006

## ບົດສະເໜີ

ວຽກງານການກະສິກຳ ແມ່ນເປັນວຽກງານໜຶ່ງ ທີ່ສຳຄັນຢູ່ປະເທດເຮົາ. ພະນັກງານວິຊາການ ແລະ ນັກວິຊາການປະຈຳບ້ານ ແມ່ນມີບົດບາດສຳຄັນ ໃນການປະຕິບັດໜ້າທີ່ຂອງຕົນ ໂດຍການນຳພາ ຊຸກຍູ້ປະຊາຊົນ ເພື່ອໃຫ້ເຂົາເຈົ້າ, ຊຶ່ງເປັນຜູ້ທີ່ທຳການຜະລິດຕົວຈິງ ມີຄວາມເຂົ້າໃຈ ແລະ ປະຍຸກນຳໃຊ້ເຕັກນິກວິຊາການໃຫ້ເຂົ້າກັບຕາມແຕ່ລະທ້ອງຖິ່ນ ໃຫ້ເໝາະສົມ .

ປື້ມຄູ່ມືສະບັບນີ້ສ້າງຂຶ້ນ ເພື່ອເປັນສ່ອງທາງພື້ນຖານໃນການປະຕິບັດຕົວຈິ່ງໃຫ້ກັບນັກວິຊາການ ແລະ ປະຊາຊົນທົ່ວໄປ, ຊຶ່ງມີເນື້ອຫາເຂົ້າໃຈໄດ້ງ່າຍ ແລະ ສອດຄ່ອງກັບສະພາບຕົວຈິງ.

ປະຈຸບັນ, ເຄືອຕົບຕີ່ເປັນສິນຄ້າທີ່ກຳລັງໄດ້ຮັບຄວາມນິຍົມ ແລະ ມີການເກັບຊື້ຢ່າງຟົດຟື້ນ ຈາກພໍ່ຄ້າທັງພາຍໃນ ແລະ ຕ່າງປະເທດ ແບບບໍ່ຈຳກັດຈຳນວນ, ໂດຍສະເພາະແມ່ນ ພໍ່ຄ້າຊາວຂາຍຈາກປະເທດຈີນ. ສິ່ງດັ່ງກ່າວ ເປັນສາຍເຫດພາໃຫ້ປະຊາຊົນພາກັນເກັບກູ້ເຄືອຕົບຕີ່ມາຂາຍຢ່າງຊະຊາຍ, ເກັບບໍ່ຖືກວິທີ (ເກັບກູ້ທັງຮາກ ແລະ ລຳຕົ້ນ) ເຮັດໃຫ້ເຄືອຕົບຕີ່ມີການດັບສູນໄປຈາກປ່າທຳມະຊາດໄປເທື່ອລະກ້າວ.

ຈຸດປະສົງຂອງປື້ມຄູ່ມືສະບັບນີ້ແມ່ນ ເພື່ອໃຊ້ເປັນບ່ອນອີງທາງດ້ານວິຊາການ ໃຫ້ແກ່ພະນັກງານ ແລະ ນັກວິຊາການປະຈຳບ້ານ ໃນການລົງປຸກລະດົມ ແລະ ແນະນຳເຕັກນິກໃນການປູກຕົບຕີ່, ແຕ່ມັນຈະບໍ່ແມ່ນຂໍ້ກຳນົດທາງດ້ານເຕັກນິກ ທີ່ບັງຄັບໃຫ້ໃຊ້ຕາມທຸກຢ່າງ.

ຜູ້ຮຽບຮຽງຫວັງຢ່າງຍິ່ງວ່າ ປື້ມຄູ່ມືສະບັບນີ້ ຄົງຈະເປັນປະໂຫຍດບໍ່ຫຼາຍກໍ່ໜ້ອຍ ໃຫ້ແກ່ພະນັກ ງານ ແລະ ນັກວິຊາການປະຈຳບ້ານ, ພ້ອມທັງເປັນເຄື່ອງມື ໃນການລົງປຸກລະດົມ ແລະ ແນະນຳເຕັກນິກໃນການປູກຕົບຕີ່ ໃຫ້ແກ່ປະຊາຊົນບັນດາເຜົ່າ ໃຫ້ມີສວນຕົບຕີ່ເປັນຂອງຕົນເອງເພີ່ມຫຼາຍຂຶ້ນ, ທັງນີ້ກໍ່ເພື່ອເປັນການ ສ້າງລາຍຮັບທາງດ້ານເງິນສົດ ໃຫ້ແກ່ປະຊາຊົນບັນດາເຜົ່າໃຫ້ເພີ່ມຂຶ້ນເທື່ອລະກ້າວ.

## <u>ປະຫວັດຄວາມເປັນມາ ຂອງການເກັບກູ້ຕົບຕີ່ ຢູ່ ເມືອງຜົ້ງສາລີ</u>

ການເກັບຊື້ເຄືອຕົບຕີ່ຢູ່ເມືອງຜົ້ງສາລີ ແມ່ນມີມາຫຼາຍໆປີແລ້ວ, ແຕ່ໄດ້ຮັບຄວາມນິຍົມ ແລະ ຊື້ຂາຍກັນຫຼາຍແມ່ນ ໃນຊ່ວງໄລຍະ 3-4 ປີຫລັງຜ່ານມານີ້, ຕະຫຼາດຫຼັກໆ ແມ່ນ ຢູ່ ປະເທດຈີນ, ໂດຍ ມີຊາວຄ້າຂາຍຂອງເມືອງຜົ້ງສາລີ ເປັນຜູ້ເກັບຊື້ ແລ້ວນຳໄປຂາຍຢູ່ເມືອງຫຼ້າ, ປະເທດຈີນ. ນອກຈາກນັ້ນ ກໍ່ຍັງມີຊາວຄ້າຂາຍຄົນຈີນເຂົ້າມາເກັບຊື້ຢູ່ເມືອງຜົ້ງສາລີ ຕື່ມອີກຈຳນວນໜຶ່ງ, ສ່ວນເລື່ອງລາຄາແມ່ນຂຶ້ນໆ-ລົງໆຕາມແຕ່ລະໄລຍະ, ຊຶ່ງຈະຂໍຍົກຕົວຢ່າງ ລາຄາການຊື້ຂາຍໃນຊ່ວງເດືອນ ພະຈິກ ຫາ ເດືອນ ທັນວາ ປີ 2004 ນີ້ ແມ່ນ ລາຄາຊື້ນຳຊາວບ້ານ ທີ່ນຳມາຂາຍ

ຢູ່ບ້ານຫາດສາ, ທັງໃນມື້ທີ່ມີຕະຫຼາດນັດ (ວັນທີ 15 ແລະ 30 ຂອງແຕ່ລະເດືອນ) ແລະ ມື້ທຳມະດາ ແມ່ນ 5 500 - 6 000 ກີບຕໍ່ກິໂລກຼາມຂອງຕົບຕີ່ແຫ້ງ.

ໃນໄລຍະຜ່ານມາ ການຊອກຫາຕົບຕີ່ຕາມປ່າທຳມະຊາດຂອງປະຊາຊົນບັນດາບ້ານຕ່າງໆ ແມ່ນຫາໄດ້ງ່າຍ ແລະ ໄດ້ຫຼາຍ, ແຕ່ຍ້ອນຄວາມຕ້ອງການທີ່ຢາກໄດ້ຕົບຕີ່ໃນປະລິມານທີ່ຫຼາຍ ເພື່ອຈະໄດ້ເງິນທີ່ຫຼາຍຂຶ້ນ ມັນຈຶ່ງເຮັດໃຫ້ປະຊາຊົນມີການເກັບກູ້ຕົບຕີ່ນັບມື້ນັບຫຼາຍຂຶ້ນ. ມາເຖິງປະຈຸບັນ ເຄືອຕົບຕີ່ຕາມປ່າແມ່ນນັບມື້ນັບຫາໄດ້ຍາກ, ບາງເຂດແມ່ນບໍ່ມີເຄືອຕົບຕີ່ແລ້ວ ໂດຍສະເພາະແລ້ວ ແມ່ນຕາມປ່າເຂດໄກ້ບ້ານ ຊຶ່ງວ່າໃນເຂດນີ້ແມ່ນບໍ່ມີຕົບຕີ່ຫລົງເຫລືອຢູ່ເລີຍ, ທັງນີ້ກໍ່ຍ້ອນສາຍເຫດມາຈາກ ການເກັບກູ້ຕົບຕີ່ຂອງປະຊາຊົນແມ່ນມີລັກສະນະການເກັບກູ້ແບບດັບສູນ, ຊຶ່ງວ່າປະຊາຊົນໄດ້ເກັບກູ້ເອົາທັງຮາກ ແລະ ເຄືອ. ສາເຫດຫນຶ່ງກໍ່ເພາະວ່າສ່ວນຮາກ ແມ່ນຈະໃຫ້ນ້ຳໜັກຫຼາຍກວ່າສ່ວນທີ່ເປັນເປືອກຂອງລຳຕົ້ນ.





ການເກັບກູ້ຕົບຕີຂອງປະຊາຊົນແມ່ນເປັນລັກສະນະດັບສູນ ຫມາຍວ່າລົກເອົາຫມົດທັງຮາກ (ຮູບ 1).
ການເກັບກູ້ທີ່ຖືກວິທີແມ່ນເລືອກຕັກເອົາລຳທີ່ໃຫ່ຍ ແລະ ປະລຳອ່ອນໄວ້ (ຮູບ 2).
ຖ້າລົກເອົາຫມົດໃນປີນີ້, ປີຫນ້າກໍ່ບໍ່ມີຕົບຕີ່ໃຫ້ເກັບກູ້ອີກ (ຮູບ 3).



## ລັກສະນະພຶດສາດ

ຊື່ພື້ນເມືອງ : ຕິບຕີ່

ຊື່ວິທະຍາສາດ : Boehmeria malabalica

ຕະກຸນ : Urticaceae

ຊື່ອື່ນໆ : ໜັງໝຽວ, ເປືອກຕຽງ (ພາສາລາວເທິງ), ຊາປານ, ເປືອກເມືອກ

ຕິບຕີ່ເປັນໄມ້ປະເພດພຸ່ມກ້ຽວ ສູງປະມານ 15-20 ແມັດ, ລຳຕົ້ນມີຂະໜາດເສັ້ນຜ່າສູນກາງປະມານ 20-30 ຊມ, ມີເປືອກໜາ ແລະ ມີຕຸ່ມອາກາດເກີດຢູ່ຕາມລຳຕົ້ນ, ເປືອກຂອງຕົ້ນທີ່ແກ່ຈະມີສີນ້ຳຕານ. ໃນເມື່ອຕົ້ນຍັງອ່ອນເປືອກຈະເປັນສີແດງ, ປອກເປືອກໄດ້ງ່າຍ.

ໃບປົ່ງອອກໃບດຽວລຽນສະຫຼັບ, ໃບເປັນຮູບໄຂ່, ຂອບໃບເປັນບັກຄືແຂ້ວເລື່ອຍ, ປາຍໃບແຫຼມ, ກົກໃບມົນ, ກວ້າງ 2.5-4 ຊມ, ຍາວ 6-8 ຊມ, ກ້ານໃບຈະມີສີແດງຍາວປະມານ 1-1.5 ຊມ, ຊໍ່ດອກເປັນຈຸ້ມເກີດຕາມງ່າມໃບ. ລະດູການອອກດອກ ແມ່ນຢູ່ລະຫວ່າງເດືອນມິຖຸນາ ຫາເດືອນກໍລະກົດ. ໝາກຕິບຕີມີລັກສະນະມົນ, ມີແກ່ນດຽວ ຊຶ່ງໝາກຈະສຸກແກ່ຢູ່ລະຫວ່າງເດືອນສິງຫາ ຫາດືອນກັນຍາ.









- ຕົ້ນຕິບຕີ່ປູກໄດ້ປະມານ 3 ເດືອນ (ຮູບ 1)
- ຕົ້ນຕິບຕີ່ກຳລັງຈໍ່ດອກ (ຮູບ 2)
- ຕົ້ນຕິບຕີ່ປູກໄດ້ປະມານ 6 ເດືອນ (ຮູບ 3)
- ຕົ້ນຕິບຕີ່ເລື່ອຂຶ້ນຕາມກົກໄມ້ (ຮູບ 4)

# ພື້ນທີ່ ແລະ ສະພາບແວດລ້ອມ

## *ພື້ນທີ່ ແລະ ສະພາບແວດລ້ອມ ທີ່ເໝາະສົມແກ່ການປູກຕົບຕີ່*

ຕົບຕີ່ແມ່ນມີການຈະເລີນເຕີບໂຕ ແລະ ກະຈາຍຕົວຢູ່ຕາມປ່າທຳມະຊາດທົ່ວໄປ. ພື້ນທີ່ໆເໝາະສົມແກ່ການປູກຕົບຕີ່ແມ່ນເຂດທີ່ມີຄວາມຊຸ່ມແຕ່ນ້ຳບໍ່ຖ້ວມ, ດິນສາມາດລະບາຍນ້ຳໄດ້ດີ, ດິນມີຄວາມອຸດົມສົມບູນໄປດ້ວຍແຮ່ທາດຕ່າງໆ, ພື້ນທີ່ເຂດແຄມສາຍນ້ຳ ຫ່າງຈາກສາຍນ້ຳປະມານ 50 ແມັດ, ສູງຈາກລະດັບນ້ຳທະເລ 400 - 800 ແມັດ, ແຕ່ຕົບຕີ່ກໍ່ສາມາດຈະເລີນເຕີບໂຕໄດ້ໃນລະດັບສູງ ຈາກໜ້ານ້ຳທະເລ 1 000 -1 800 ແມັດ, ເຂດເຈີຍພູ. ແສງແດດສາມາດສ່ອງຜ່ານລົງ ສູ່ໜ້າດິນໄດ້ປະມານ 40 - 50% ຫຼື ແດດສາມາດສ່ອງຜ່ານລົງສູ່ໜ້າດິນໄດ້ໃນຕອນເຊົ້າຫຼືຕອນແລງ. ຢູ່ລາວພົບເຫັນຕົບຕີ່ໃນເຂດແຂວງພາກເໜືອ ( ແຂວງ ຜົ້ງສາລີ, ແຂວງ ອຸດົມໄຊ, ແຂວງ ຫຼວງນ້ຳທາ ແລະ ແຂວງ ບໍ່ແກ້ວ).



ຕົ້ນຕົບຕີ່ມັກເກີດມີເຂດທີ່ຊຸ່ມຊື້ນ, ມີປ່າກ້ວຍ ແລະ ຮົ່ມໄມ້ພໍປະມານ (ຮູບ 1). ນອກຈາກນັ້ນ, ມັນກໍ່ຍັງມັກເກີດໃນເຂດແຄມນ້ຳລຳທານ ທີ່ມີດິນອຸດົມສົມບູນ.



### *ພື້ນທີ່ ແລະ ສະພາບແວດລ້ອມ ທີ່ບໍ່ເໝາະສົມແກ່ ການປູກຕົບຕີ່*

ພື້ນທີ່ໆ ບໍ່ເໝາະສົມແກ່ການປູກຕົບຕີ່ ແມ່ນ ບ່ອນທີ່ເປີດແປ້ນ ບໍ່ມີຕົ້ນໄມ້ບັງແດດ, ດິນຂາດທາດອາຫານ, ນໍ້າມັກຖ້ວມ ຫຼື ຂັງ ບໍ່ສາມາດລະບາຍນໍ້າໄດ້ດີ ຫຼື ເຂດແຫ້ງແລ້ງ, ປ່າຕຶບໜາໂພດ ບໍ່ມີແສງແດດສ່ອງຊອດ ຕະຫຼອດວັນ.

ຕົ້ນຕົບຕີ່ຈະບໍ່ມັກ ແລະ ເກີດໄດ້ດີໃນເຂດທີ່ມີແສງແດດກະທົບໂດຍກົງ (ບ່ອນທີ່ບໍ່ມີປ່າໄມ້) ແລະ ນອກຈາກນັ້ນມັນຍັງບໍ່ມັກເກີດໃນເຂດທີ່ມີພູສູງຊັນ ແລະ ມີຫີນຫລາຍ.



## ການປູກຕົບຕີ່

### *ການຖາງຫຍ້າ*

ກ່ອນຈະທຳການປູກຕົບຕີ່ ພວກເຮົາຕ້ອງໄດ້ກະກຽມສະຖານທີ່ໃຫ້ດີເສຍກ່ອນ, ທັງນີ້ກໍ່ເພື່ອເຮັດໃຫ້ການປູກຕົບຕີ່ໄດ້ຮັບຜົນດີ.

ຫຼັງຈາກທີ່ຄັດເລືອກສະຖານທີ່ໄດ້ແລ້ວ ເຮົາກໍ່ທຳການຖາງຫຍ້າ ແລະ ຕົ້ນໄມ້ນ້ອຍອອກ, ຈຶ່ງໄວ້ແຕ່ຕົ້ນໄມ້ໃຫຍ່, ປະໃຫ້ແຫ້ງແລ້ວກໍ່ຈູດ ຫຍ້າ ແລະ ຕົ້ນໄມ້ນ້ອຍເລົ່ານັ້ນ.





*ການລ້ອມຮົ້ວ*

**ຫຼັງຈາກປູກຕົບຕີ່ແລ້ວ ກໍ່ຕ້ອງທຳການລ້ອມຮົ້ວ ເພື່ອປ້ອງກັນບໍ່ໃຫ້ສັດເຂົ້າທຳລາຍ ແລະ ເພື່ອເຮັດໃຫ້ຕົບຕີ່ທີ່ປູກນັ້ນ ສາມາດຈະເລີນເຕີບໂຕໄດ້ດີ, ສາມາດເກັບໄດ້ ໃນຈຳນວນທີ່ຫຼາຍຂຶ້ນ ແລະ ຂາຍໄດ້ເງິນໃນຈຳນວນທີ່ຫຼາຍຂຶ້ນ.**

ເມື່ອມີການປູກຕົບຕີ່ເປັນສວນຂອງຕົນເອງແລ້ວ, ສິ່ງຫນຶ່ງທີ່ຈະຕ້ອງໄດ້ປະຕິບັດເອົາໃຈໃສ່ແມ່ນການປ້ອງກັນສວນ ໂດຍນຳໃຊ້ຫລາຍຫຮູບແບບ ແລ້ວແຕ່ມີເງື່ອນໄຂຄວາມເຫມາະສົມ (ຮູບ 1 ການລ້ອມຮົ້ວອ້ອມສວນຕົບຕີ່ ເພື່ອປ້ອງກັນສັດລ້ຽງເຂົ້າມາກິນໃບ ຫລື ທຳລາຍຕົບຕີ).

ຖ້າປູກຕົບຕີ່ໄປແລ້ວ ແຕ່ບໍ່ມີມາດຕະການໃດໆໃນການປ້ອງກັນສວນຂອງຕົນເອງ, ມັນກໍ່ອາດຈະມີຜົນຮ້າຍຕາມມາ (ຮູບທີ່ 2, ຢາກສະແດງໃຫ້ເຫັນການທຳລາຍສວນຕົບຕີ່ຈາກສັດລ້ຽງ).





## ວິທີການປູກຕົບຕີ່

ແມ່ນສາມາດປູກໄດ້ຫຼາຍວິທີ ເປັນຕົ້ນແມ່ນ:

1. ປູກດ້ວຍແກ່ນ ແລະ ເກັບເອົາເບ້ຍຈາກປ່າມາປູກ
2. ປູກດ້ວຍການແຍກເຫງົ້າ
3. ປູກດ້ວຍລຳຕົ້ນ ຫຼື ຕັດງ່າປັກຊຳ
4. ການຝັງງ່າໄກ້ກັບໜ້າດິນ

## ການປູກດ້ວຍແກ່ນ

ເຕັກນິກໃນການປູກຕົບຕີ່ດ້ວຍແກ່ນແມ່ນ ໜຶ່ງໃນວິທີການປູກຕົບຕີ່, ການກ້າແກ່ນ ໃນສວນ ກ້າແມ່ນ ເຮັດຄ້າຍຄືກັບການກ້າແກ່ນພືດຊະນິດອື່ນ, ແກ່ນແມ່ນ ທຳການກ້າໃສ່ໜານກ້າເບ້ຍ ທີ່ໄດ້ ຜ່ານການກະກຽມມາກ່ອນແລ້ວ.

ການກະກຽມດິນສຳລັບການບັນຈຸໃສ່ໃນຖົງຢາງດຳ (ຖົງກ້າເບ້ຍ) ແມ່ນ ຕ້ອງໄດ້ປະສົມດິນ ຊາຍ, ດິນທຳມະຊາດ ແລະ ຝຸ່ນຄອກ ໃນອັດຕາສ່ວນ 1:1:1 ໃຫ້ເຂົ້າກັນດີແລ້ວບັນຈຸໃສ່ໃນຖົງ, ແກ່ນ ຄວນຈະທຳການ ເກັບຈາກປ່າທຳມະຊາດ ໃນຊ່ວງເວລາທີ່ແກ່ນສຸກແກ່ດີ(ເດືອນ 8-9), ຕາກແດດ ໃຫ້ແຫ້ງ ຫຼື ເກັບໄວ້ບ່ອນຮົ່ມ ແຕ່ບໍ່ໃຫ້ອົບເພາະວ່າຈະເຮັດໃຫ້ເມັດຕາຍ ຫຼື ເວລາເອົາໄປກ້າ ເປີເຊັນ ຄວາມງອກຈະມີໜ້ອຍ, ການກ້າໃສ່ໜານຄວນປະຕິບັດ ຢູ່ໃນລະຫວ່າງ ເດືອນ 11-12, ຫຼັງຈາກນັ້ນ ຕ້ອງໄດ້ເອົາໃຈໃສ່ບົວລະບັດຮັກສາ, ພາຍຫຼັງ ທີ່ຕົບຕີ່ຈະເລີນເຕີບໂຕມີໃບໄດ້ ປະມານ 2-3 ໃບ ແລ້ວແມ່ນ ເຮົາສາມາດນຳມາປັກຊຳໃນຖົງກ້າ ຕໍ່ໄດ້ແລ້ວຫຼັງຈາກນັ້ນ ກໍ່ທຳການເກັບຮັກສາ ໃນເຮືອນ ຊຳ ແລະ ອີກວິທີການໜຶ່ງແມ່ນ ຫຼັງຈາກທີ່ຕົ້ນກ້າ ມີໃບໄດ້ ປະມານ 5-7 ໃບ ແມ່ນ ເຮົາສາມາດນຳ ໄປປູກໃສ່ໃນສວນໄດ້ເລີຍ, ສ່ວນເບ້ຍທີ່ເກັບຈາກປ່າທຳມະຊາດແມ່ນ ປະຕິບັດຄືກັນກັບເບ້ຍທີ່ກ້າຢູ່ ໜານກ້າ.





ເບ້ຍຕົບຕີ່ ເຮົາສາມາດໄປຊອກຫາ ເອົາເບ້ຍອ່ອນທີ່ເກີດຕາມປ່າ ແລ້ວນຳ ມາປູກໄວ້ໃນສວນໄກ້ກັບບ້ານຂອງ ຕົນເອງ (ຮູບ 1 ແລະ 2).

ການປູກລັກສະນະນີ້ແມ່ນເປັນວິທີ ການທີ່ຖືກຕ້ອງ (ຮູບ 3).



## ລະດູການສຳລັບການເກັບເມັດພັນ

ຊ່ວງເວລາທີ່ໝາກ ຫຼື ແກ່ນ ຂອງຕົບຕີ່ສຸກແກ່ແມ່ນ ຢູ່ລະຫວ່າງເດືອນ 8-9, ໃນເວລາທີ່ເຮົາລົງເກັບແກ່ນຕົບຕີ່ ເຮົາຕ້ອງໄດ້ສັງເກດເບິ່ງໃຫ້ດີວ່າ ແກ່ນນັ້ນແມ່ນ ໄດ້ສຸກແກ່ດີແລ້ວ ຫຼື ຍັງ, ແກ່ນທີ່ສຸກແກ່ດີປົກກະຕິແລ້ວແມ່ນ ຈະມີສີດຳ ນັ້ນສະແດງວ່າມັນສາມາດເກັບກ່ຽວໄດ້.

## ການເກັບຮັກສາເມັດພັນ

ເມື່ອເມັດພັນໄດ້ຖືກເກັບມາຈາກປ່າແລ້ວ, ເຮົາຈະຕ້ອງໄດ້ເກັບຮັກສາໃຫ້ຖືກວິທີ, ຕາກແດດໃຫ້ແຫ້ງດີ ແລ້ວກໍ່ຢ້າງໃສ່ຄວນໄຟ, ຫຼັງຈາກທີ່ແຫ້ງດີແລ້ວ ທຳການຫໍ່ເມັດພັນດ້ວຍເຈ້ຍ, ໃບຕອງແຫ້ງ ຫຼື ຜ້າແພແຫ້ງຕ່າງໆແລ້ວກໍ່ນຳໄປເກັບຮັກສາໄວ້ໃນບ່ອນທີ່ມີອາກາດຖ່າຍເທສະດວກ, ຫຼີກ ເວັ້ນບ່ອນທີ່ມີອຸນຫະພູມສູງ, ຄວາມຮ້ອນສູງ, ບ່ອນທີ່ມີຄວາມຊຸ່ມ ແລະ ບ່ອນທີ່ມີອຸນຫະພູມຕ່ຳຈົນເກີນໄປ.

## ການກະກຽມດິນໜານກ້າ

ການກ້າແກ່ນແມ່ນ ມັນຮຽກຮ້ອງເຖິງການກະກຽມດິນທີ່ດີ ເພື່ອເປັນສິ່ງຄ້ຳປະກັນ ໃຫ້ແກ່ນ ທີ່ກ້ານັ້ນມີຄວາມງອກດີ, % ຄວາມງອກສູງ, ໜານກ້າຕ້ອງປະກອບດ້ວຍ ດິນທຳມະຊາດ 2 ສ່ວນ, ດິນຊາຍ 3 ສ່ວນ ແລະ ໜຶ່ງສ່ວນຂອງຝຸ່ນຄອກ ປະສົມໃຫ້ເຂົ້າກັນດີ, ການກະກຽມໜານແມ່ນ ເຮັດຄືກັນກັບການເຮັດໜານຜັກ ແລະ ກໍ່ຫວ່ານແກ່ນໃຫ້ທົ່ວໜານຢ່າງສະເໝີສະເໝີ.

ໝາຍເຫດ : ຖ້າຫາກວ່າເຮົາແປງດິນໜານກ້າບໍ່ມຸ່ນ ມີກ້ອນນ້ອຍກ້ອນໃຫຍ່ ເຮົາຄວນຫົດນ້ຳໜານກ້າກ່ອນຫວ່ານແກ່ນຕົບຕີ່ລົງໃສ່ ເພາະວ່າຖ້າຫາກເຮົາຫວ່ານແກ່ນໃສ່ເລີຍມັນຈະເຮັດໃຫ້ແກ່ນຕົບຕີ່ຕົກຫຼືບດິນແລ້ວມັນຈະບໍ່ສາມາດງອກພົ້ນດິນອອກມາໄດ້ ຫຼື ງອກຍາກ.

## ເຕັກນິກການກ້າແກ່ນ ໃສ່ໜານກ້າ

ເຮົາຄວນຈະກ້າແກ່ນ ໃນສວນກ້າຢູ່ລະຫວ່າງເດືອນ 11-12 ຫຼັງຈາກ ທີ່ໄດ້ມີການກະກຽມໜານທີ່ດີແລ້ວ, ການກ້າແກ່ນ ໃສ່ໜານກ້າແມ່ນ ເຮົາເຮັດຄືກັນກັບການກ້າແກ່ນຜັກ, ການກ້າແກ່ນກາເຟ, ການກ້າແກ່ນແມ່ນ ມັນຈຳເປັນທີ່ຈະຕ້ອງມີນ້ຳສະໜອງໃຫ້ຢ່າງພຽງພໍກັບຄວາມຕ້ອງການໃນແຕ່ລະໄລຍະ.

## ການນຳເອົາຕົ້ນກ້າເຂົ້າຊຳໃນຖົງ ແລະ ການບົວລະບັດຮັກສາ

### *ການກຽມດິນສຳລັບໃສ່ຖົງປັກຊຳ*

ການກຽມດິນສຳລັບໃສ່ຖົງປັກຊຳແມ່ນ ຕ້ອງປະສົມດິນທຳມະຊາດ, ດິນຊາຍ ແລະ ຝຸ່ນ ຄອກ ໃນອັດຕາສ່ວນ 1 :1 :1 ປະສົມອັດຕາສ່ວນດັ່ງກ່າວໃຫ້ເຂົ້າກັນດີແລ້ວກໍ່ ບັນຈຸໃສ່ໃນຖົງກ້າເບ້ຍ

ໃຫ້ພໍເໝາະ, ຫຼຶກເອົາຕົ້ນກ້າຈາກໝານກ້າໝົດທັງຮາກ ແລ້ວນຳມາບັນຈຸໃສ່ໃນຖົງປັກຊຳ ຫຼັງຈາກນັ້ນ ກໍ່ນຳໄປຮັກສາໃນເຮືອນຊຳ

*__ວິທີການຫຼຶກເອົາເບ້ຍ__*

ການຫຼຶກເອົາຕົ້ນກ້າໝົດທັງຮາກແມ່ນ ຕ້ອງໄດ້ເຮັດດ້ວຍຄວາມລະມັດລະວັງ ເພື່ອເຮັດໃຫ້ ຕົ້ນກ້າທີ່ນຳມາປັກຊຳນັ້ນງາມ ແລະ ແຂງແຮງດີ, ກ່ອນການຫຼຶກເອົາຕົ້ນກ້າໝົດທັງຮາກນັ້ນ ຕ້ອງໄດ້ ຫົດນ້ຳໝານກ້າທີ່ຈະທຳການຫຼຶກເອົາຕົ້ນກ້ານັ້ນ ໃຫ້ຊຸ່ມກ່ອນປະມານ 30 ນາທີຂຶ້ນໄປ, ຄວນໃຊ້ໄມ້ ກົ້ມອ້ອມຕົ້ນກ້າ, ຖ້າຫາກວ່າ ທ່ານຫາກຖະໜັດມືເບື້ອງຂວາ ໃຫ້ໃຊ້ມືເບື້ອງຂວາກົ້ມດິນ ແລະ ໃຊ້ມືເບື້ອງຊ້າຍດຶງເອົາ ຕົ້ນກ້າຂຶ້ນມາຄ່ອຍໆ ຫຼີກລ້ຽງບໍ່ໃຫ້ກະທົບກະເທືອນເຖິງລຳຕົ້ນ ແລະ ຮາກ.

*__ການນຳເອົາຕົ້ນກ້າມາປັກຊຳໃສ່ໃນຖົງປັກຊຳ__*

ໃຫ້ໃຊ້ໄມ້ ສຽບລົງໄປໃນຖົງທີ່ບັນຈຸດິນ(ຈຸດໃຈກາງຂອງຖົງຈາກດ້ານເທິງ) ໃຫ້ເປັນຮູ ແລ້ວ ນຳເອົາເບ້ຍມາໃສ່ຕາມຮູດັ່ງກ່າວ ຫຼັງຈາກນັ້ນກໍ່ເອົາມືບີບດິນໃສ່ຕົນກ້າໃຫ້ແໜ້ນ ແລະ ກໍ່ນຳໄປເກັບ ມ້ຽນໃນເຮືອນຊຳ ຫຼື ບ່ອນຮົ່ມ ແລ້ວກໍ່ຫົດນ້ຳພ້ອມ.

*__ການບົວລະບັດຮັກສາ__*

ຫຼັງຈາກທີ່ເຮົາເອົາໄປໄວ້ໃນເຮືອນຊຳແລ້ວຕ້ອງໄດ້ເອົາໃຈໃສ່ໃນການບົວລະບັດຮັກສາໃຫ້ດີ ຫຼັງຈາກທີ່ປັກຊຳແລ້ວ, ການໃຫ້ນ້ຳແມ່ນ ຕ້ອງໄດ້ໃຫ້ 2-3 ເທື່ອຕໍ່ອາທິດ ໃນຕອນເຊົ້າ ແລະ ຕອນ ບ່າຍ ເພື່ອໃຫ້ມີຄວາມຊຸ່ມຢ່າງພຽງພໍ ແຕ່ບໍ່ ໃຫ້ຫຼາຍຈົນເກີນໄປ(ຫ້າມບໍ່ໃຫ້ຫົດນ້ຳຕິດຕໍ່ກັນເປັນເວລາ ຫຼາຍວັນ) ບໍ່ສະນັ້ນ ຕົບຕີ້ອາດ ຈະເນົ່າຕາຍ ໄດ້.

__ການນຳເອົາເບ້ຍໄປປູກ__

*__ເບ້ຍຈາກເບົ້າ__*

ຫຼັງຈາກທີ່ນຳເອົາເບ້ຍໄປຊຳໄດ້ 2-3 ເດືອນແລ້ວເຮົາກໍ່ສາມາດທີ່ຈະນຳເອົາ ໄປປູກໃສ່ສວນ ໄດ້, ເວລາປູກຕ້ອງໄດ້ ສີກເອົາຖົງຢາງອອກກ່ອນນຳເອົາເບ້ຍລົງຂຸມ.

*__ເບ້ຍຈາກໝານ ແລະ ຈາກປ່າ__*

ເມື່ອສັງເກດເຫັນວ່າ ເບ້ຍມີໃບໄດ້ 5-7 ໃບແລ້ວ ເຮົາກໍ່ສາມາດນຳໄປປູກໃສ່ສວນໂດຍກົງ ໄດ້ເລີຍ ແຕ່ເຮົາຕ້ອງໄດ້ຕັດແຕ່ງໃຫ້ ເໝາະສົມກ່ອນການປູກ.

## ການປູກດ້ວຍການແຍກເຫງົ້າ

ແມ່ນນຳໃຊ້ເຕັກນິກທີ່ງ່າຍດາຍ, ນຳໃຊ້ແຮງງານໜ້ອຍ, ປະຢັດເວລາ ແລະ ໃຫ້ຜົນຕອບ ແທນໃວ.

### *ການເລືອກເຫງົ້າທີ່ຈະນຳມາປູກ*

ເມື່ອເຮົາລົງເລືອກເຫງົ້າທີ່ຈະນຳມາປູກ ເຮົາຕ້ອງໄດ້ທຳການສັງເກດໃຫ້ດີ, ເພາະວ່າ ພວກ ມັນແມ່ນມີຄວາມແຕກຕ່າງກັນຫຼາຍ ທາງດ້ານຈຳນວນຕົ້ນ ແລະ ຈຳນວນງ່າ, ສິ່ງສຳຄັນທີ່ສຸດ ແມ່ນຕ້ອງເລືອກເອົາເຫງົ້າທີ່ມີລຳຕົ້ນແຂງແຮງດີ, ບໍ່ແກ່ຈົນເກີນໄປ ແລະ ປາສະຈາກຮ່ອງຮອຍການທຳລາຍຂອງແມງໄມ້, ເຮົາຕ້ອງໄດ້ສັງເກດເບິ່ງຈຳນວນຕົ້ນ ຖ້າຫາກວ່າ ມີຈຳນວນຕົ້ນຫຼາຍໃນເຫງົ້າໃຫຍ່ເຫງົ້າດຽວ, ຕ້ອງໄດ້ຜ່າແຍກອອກເປັນສ່ວນນ້ອຍໆ ທີ່ມີ 2-3 ລຳຕົ້ນຕໍ່ສ່ວນ ຫຼັງຈາກນັ້ນ ກໍ່ນຳໄປປູກໄດ້ເລີຍ.

### *ການຕັດແຕ່ງກ່ອນການເພາະປູກ*

ກ່ອນການເພາະປູກ ມັນຮຽກຮ້ອງໃຫ້ມີການຕັດແຕ່ງທີ່ດີເສຍກ່ອນ, ເພາະວ່າ ຕົ້ນຕົບຕີທີ່ຈະນຳໄປປູກນັ້ນແມ່ນ ມີລຳຕົ້ນທີ່ສູງຍາວ, ງ່າຫຼາຍ ແລະ ຮາກຍາວ, ງ່າຕ້ອງໄດ້ຕັດ ຮັກສາໄວ້ພຽງແຕ່ 2-3 ງ່າ ທີ່ຍາວ 30-50 Cm ແລະ ຮາກທີ່ຍາວຕ້ອງໄດ້ຕັດອອກໃຫ້ເຫຼືອ ພຽງແຕ່ 5-10 Cm, ສິ່ງສຳຄັນທີ່ສຸດຄື : ເວລາຕັດບໍ່ໃຫ້ຈຸດປາຍບ່ອນທີ່ຕັດນັ້ນແຕກມຸ່ນ ທັງງ່າ ແລະ ຮາກ ເພາະວ່າ ມັນຈະເປັນສາຍເຫດ ເຮັດໃຫ້ຕົ້ນຕົບຕີເນົ່າ ຫຼື ຕາຍ ກ່ອນທີ່ຮາກ, ງ່າ ແລະ ລຳຕົ້ນໃໝ່ຈະປົ່ງອອກມາ.

### *ລະດູການທີ່ເໝາະສົມໃນການ ນຳເອົາເຫງົ້າ ຫຼື ລຳຕົ້ນມາປູກ*

ຫຼັງຈາກທີ່ໄດ້ຂຸດເຫງົ້າຕົບຕີອອກມາຈາກປ່າແລ້ວ ຕ້ອງໄດ້ທຳການເພາະປູກຢ່າງຮີບດ່ວນ, ບໍ່ຄວນປະໄວ້ດົນເກີນ 2-3 ມື້ ເພາະວ່າມັນອາດຈະແຫ້ງ, % ການປົ່ງຮາກໃໝ່ ແລະ ການປົ່ງໜໍ່ມີໜ້ອຍ ເຮັດໃຫ້ຕົ້ນຕົບຕີທີ່ປູກນັ້ນຢຸດສະງັກການຈະເລີນເຕີບໂຕ ແລະ ກໍ່ບໍ່ມີການຈະເລີນເຕີບໂຕເທົ່າທີ່ຄວນ, ລະດູການທີ່ເໝາະສົມທີ່ສຸດສຳລັບການປູກຕົບຕີແມ່ນ ຢູ່ລະຫວ່າງເດືອນ 5-6 ຫຼື ໃນຊ່ວງຕົ້ນລະດູຝົນ.

## ເຕັກນິກການປູກ

ເຮົາຕ້ອງໄດ້ເລືອກພື້ນທີ່ປູກຕົບຕີ ໃຫ້ເໝາະສົມ, ມີຄວາມສາມາດທາງດ້ານແຮງງານ ແລະ ການລົງທຶນບາງເລັກນ້ອຍ, ຮູ້ນຳໃຊ້ເຕັກນິກວິທີການທີ່ຖືກຕ້ອງ ນັ້ນກໍ່ໝາຍຄວາມວ່າ ເຮົາລົງທຶນໜ້ອຍ ແຕ່ໄດ້ຜົນຕອບແທນສູງກວ່າການລົງທຶນ, ການປູກຫຼາຍ ແຕ່ຜົນຕອບແທນຜົດມີໜ້ອຍ, ເຮັດໃຫ້ເສຍແຮງງານ, ເສຍເວລາ ແລະ ກໍ່ເສຍທຶນໄປນຳອີກດ້ວຍ, ສະນັ້ນ ເຕັກນິກການປູກ ທີ່ເໝາະສົມແມ່ນ ມີດັ່ງນີ້ :

- ຂຸດຂຸມ ຂະໜາດ 20 ຊມ (ກວ້າງ) x20 ຊມ (ຍາວ) x 20 ຊມ (ເລິກ)

- ໄລຍະຫ່າງລະຫວ່າງຕົ້ນ 2-3 ແມັດ
- ໄລຍະຫ່າງລະຫວ່າງແຖວ 2-2.5 ແມັດ
- ການເພີ່ມຄວາມອຸດົມສົມບູນໃຫ້ແກ່ດິນແມ່ນ ສິ່ງທີ່ຄວນໄດ້ປະຕິບັດ

## ການບົວລະບັດຮັກສາ

ການບົວລະບັດຮັກສາແມ່ນ ອີກກິດຈະກຳໜຶ່ງທີ່ເຮົາຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດ, ໂດຍສະເພາະແມ່ນ ການສ້າງຮົ້ວປ້ອງກັນ, ການກຳຈັດວັດສະພືດ, ການຕັດແຕ່ງກິ່ງງ່າ ສິ່ງເລົ່ານີ້ແມ່ນ ສິ່ງທີ່ຈະຕ້ອງໄດ້ປະຕິບັດ ຢ່າງສະໝ່ຳສະເໝີ.

## ການສ້າງຮົ້ວປ້ອງກັນ

ການສ້າງຮົ້ວປ້ອງກັນແມ່ນ ກິດຈະກຳທີ່ມີຄວາມສຳຄັນ ສຳລັບວຽກງານກະສິກຳ, ເຮົາຄວນຈະເລີ້ມການສ້າງຮົ້ວປ້ອງກັນ ເມື່ອເຮົາເລີ້ມລົງປະຕິບັດວຽກງານການກຽມດິນ, ຮົ້ວປ້ອງກັນນັ້ນເຮົາຈະຕ້ອງໄດ້ໝັ່ນ ກວດສອບຢ່າງເປັນປົກກະຕິ ເພື່ອບໍ່ໃຫ້ມີສັດຕູເຂົ້າທຳລາຍເຄື່ອງປູກໃນສວນ.

## ການກຳຈັດວັດສະພືດ

ເຮົາຈະໄດ້ທຳການກຳຈັດວັດສະພືດ ໃນຊ່ວງປີທຳອິດ ຂອງການເພາະປູກ 1-2 ຄັ້ງ/ປີ, ແຕ່ມັນບໍ່ຈຳເປັນທີ່ຈະທຳການກຳຈັດວັດສະພືດຄືກັບການກຳຈັດວັດສະພືດ ໃນໄຮ່ເຂົ້າ, ພາຍຫຼັງຈາກປີ ທີ ສອງ ແລະ ສາມ ໄປແລ້ວຕົ້ນຕິບຕີ່ຈະຂະຫຍາຍເຕັມພື້ນທີ່ ຊຶ່ງຫຍ້າຈະບໍ່ສາມາດເກີດໄດ້.

## ການຕັດແຕ່ງກິ່ງງ່າ

ເມື່ອຕິບຕີ່ໄດ້ຈະເລີນເຕີບໂຕຂື້ນ ພວກເຮົາຈະສັງເກດເຫັນວ່າມັນມີຫຼາຍລຳຕົ້ນ, ງ່າ ແລະ ລຳຕົ້ນກໍ່ສາມາດເກີດຂື້ນຕາມເຫງົ້າ ຂອງມັນໄດ້, ວຽກງານການຕັດແຕ່ງແມ່ນ ກິດຈະກຳທີ່ສຳຄັນ ທີ່ຈະຕ້ອງໄດ້ປະຕິບັດ, ຖ້າຫາກວ່າ ເຫງົ້າຫາກມີຫຼາຍລຳຕົ້ນ ຫຼື ຫຼາຍງ່າ(ຫຼາຍກວ່າ 10 ລຳຕົ້ນ), ເຮົາຄວນຈະທຳການຕັດພວກມັນອອກ ໂດຍການຕັດເອົາງ່າທີ່ບໍ່ດີ, ບໍ່ງາມ ຫຼື ມີຮູແມງໄມ້ເຈາະຖິ້ມ, ເຮົາຄວນຈົ່ງໄວ້ 7-10 ຕົ້ນ ຫຼື ງ່າຕໍ່ເຫງົ້າ, ຖ້າຫາກເຮົາຈົ່ງປະໄວ້ຫຼາຍງ່າໂພດ, ມັນຈະບໍ່ເຮັດໃຫ້ລຳຕົ້ນ ຫຼື ງ່າຂອງຕິບຕີ່ນັ້ນໃຫຍ່ເທົ່າທີ່ຄວນ ຍ້ອນການຍາດແຍງທາດອາຫານທີ່ມີໃນດິນ.

## ການນຳເອົາຕົ້ນ ຫຼື ງ່າມາປັກຊຳ

ການປັກຊຳລຳຕົ້ນ ຫຼື ງ່າ ໃສ່ຖົງປັກຊຳແມ່ນ ວິທີການໜຶ່ງທີ່ປະຊາຊົນເຄີຍປະຕິບັດຜ່ານມາໃນບາງໝູ່ບ້ານ, ການປັກຊຳລຳຕົ້ນ ຫຼື ງ່າ ໃສ່ຖົງປັກຊຳແມ່ນ ຈະຕ້ອງໄດ້ໃຊ້ແຮງງານ, ເວລາ ແລະ ທຶນຫຼາຍ ແຕ່ຈະໄດ້ຜົນດີ ຊຶ່ງມີຂັ້ນຕອນດັ່ງລຸ່ມນີ້ :

## ການກຽມດິນ ເພື່ອບັນຈຸໃນຖົງປັກຊໍາ

ການກຽມດິນ ເພື່ອບັນຈຸໃນຖົງປັກຊໍາແມ່ນ ເຮັດຄືກັນກັບການກຽມດິນເພື່ອການກ້າແກ່ນໃນສວນກ້າທົ່ວໄປເຊັ່ນ : ດິນຈາກທໍາມະຊາດ, ດິນຊາຍ ແລະ ຝຸ່ນຄອກ ໃນອັດຕາສ່ວນ 1 :1 :1, ປະສົມໃຫ້ເຂົ້າກັນດີແລ້ວບັນຈຸໃສ່ໃນຖົງໃຫ້ເໝາະສົມ ຫຼັງຈາກນັ້ນກໍ່ນໍາເອົາງ່າຕິບຕີ, ຊຶ່ງຜ່ານການຕັດເປັນທ່ອນນັ້ນ ມາໃສ່ໃນຮູໃນຖົງປັກຊໍາ ແລ້ວກໍ່ນໍາໄປໄວ້ໃນເຮືອນຊໍາ.

## ການຄັດເລືອກລໍາຕົ້ນ ຫຼື ງ່າ ທີ່ດີ ເພື່ອການປັກຊໍາ

ຕິບຕີ່ແມ່ນ ຈະມີຫຼາຍງ່າ, ສະນັ້ນ ເຮົາຄວນຈະເລືອກໃຫ້ດີ ເພື່ອໃຫ້ໄດ້ງ່າທີ່ດີເພື່ອການປັກ ຊໍາ, ງ່າທີ່ຈະນໍາມາປັກຊໍາຕ້ອງເປັນງ່າທີ່ດີ, ບໍ່ມີຮ່ອງຮອຍການທໍາລາຍຂອງແມງໄມ້, ຂະໜາດຂອງງ່າຈະຕ້ອງມີເສັ້ນຜ່າສູນກາງປະມານ 0.5-2 ຊມ ແລະ ຈະຕ້ອງເປັນງ່າທີ່ແກ່.

## ການຕັດງ່າ ເພື່ອບັນຈຸໃນຖົງປັກຊໍາ

ການຕັດງ່າແມ່ນ ປັດໃຈໜຶ່ງ ທີ່ສົ່ງຜົນເຖິງ ການປັກຊໍາງ່າ ໃນຖົງປັກຊໍາ, ຖ້າຫາກເຮົາຕັດງ່າບໍ່ດີ ອາດຈະເຮັດໃຫ້ງ່າໃນຖົງປັກຊໍານັ້ນເນົ່າ ແລະ ສຸດທ້າຍກໍ່ຕາຍ, ສະນັ້ນ ເຮົາຄວນເອົາໃຈໃສ່ໃນການຕັດງ່າ, ງ່າຄວນຕັດເຈັ້ຍໂດຍບໍ່ໃຫ້ມີຮອຍແຕກ ແລະ ບວບຊໍ້າ ທັງສອງສົ້ນສຸດ, ລວງຍາວທີ່ເໝາະສົມທີ່ສຸດ ໃນການຕັດຕິບຕີ່ໃຫ້ເປັນທ່ອນເພື່ອການປັກຊໍານັ້ນແມ່ນ ປະມານ 20-25 ຊມ ແລະ ປະກອບມີ 2-3 ຕາຕໍ່ທ່ອນ.

## ຖົງປັກຊໍາ

ເຮົາຄວນຈະໃຊ້ໄມ້ກົມ ທີ່ມີປາຍແຫຼມ ເຈາະຮູລົງໄປໃຈກາງຂອງຖົງທີ່ບັນຈຸດິນແລ້ວ, ເພື່ອເຮັດໃຫ້ເປັນຮູ, ມັນຈະມີຄວາມສະດວກໃນເວລາທີ່ພວກເຮົານໍາເອົາຕິບຕີ່ມາສຽບຕາມຮູ ແລະ ກໍ່ໃຊ້ມືເນັ້ນດິນອ້ອມໆ ງ່າປັກຊໍາ, ຫຼັງຈາກນັ້ນກໍ່ນໍາເອົາຖົງປັກຊໍາພ້ອມຕິບຕີ່ ໄປໄວ້ໃນເຮືອນຊໍາ, ຫຼີກລ້ຽງບໍ່ໃຫ້ໃຊ້ງ່າຕິບຕີ່ ທີ່ຕັດນັ້ນສຽບລົງໂດຍກົງ ເພາະມັນອາດຈະເຮັດໃຫ້ປາຍເກີດບວບຊໍ້າໄດ້.

## ການບົວລະບັດຮັກສາ

### *ການໃຫ້ນໍ້າ*

ການໃຫ້ນໍ້າແມ່ນ ເພື່ອເຮັດໃຫ້ດິນມີຄວາມຊຸ່ມ, ແຕ່ບໍ່ໃຫ້ປຽກຫຼາຍຈົນເກີນໄປ ເພາະມັນອາດເຮັດໃຫ້ຕິບຕີ່ໃນຖົງປັກຊໍານັ້ນເນົ່າຕາຍໄດ້, ການໃຫ້ນໍ້າຄວນໃຫ້ 2 ຄັ້ງຕໍ່ອາທິດ (ຄັ້ງໜຶ່ງໃນຕອນເຊົ້າ ແລະ ອີກຄັ້ງໜຶ່ງໃນຕອນບ່າຍ) ຖ້າຫາກວ່າ ມີຝົນຕົກແມ່ນ ບໍ່ຈໍາເປັນຕ້ອງໄດ້ໃຫ້ນໍ້າ.

*ການກຳຈັດວັດສະພືດ ແລະ ແມງໄມ້*

ບາງຄັ້ງເຮົາອາດຈະຕ້ອງໄດ້ກຳຈັດວັດສະພືດ ໃນຖົງປັກຊຳ ໂດຍການຫຼົກເອົາວັດສະພືດອອກຈາກຖົງປັກຊຳ ພ້ອມທັງສັງເກດເບິ່ງພະຍາດ ແລະ ແມງໄມ້ທີ່ເກີດນັ້ນ ຖ້າຫາກມີກໍ່ໃຫ້ກຳຈັດ ແລະ ຫາວິທີປ້ອງກັນແຕ່ຫົວທີ.

<u>ເຕັກນິກການປູກ</u>

ຫຼັງຈາກປັກຊຳໄດ້ 3-4 ເດືອນ ເຮົາກໍ່ສາມາດນຳໄປປູກໃນສວນໄດ້, ກ່ອນທີ່ຈະທຳການປູກໃນສວນແມ່ນ ເຮົາຈະຕ້ອງໄດ້ກະກຽມແຮງງານໃຫ້ພຽງພໍ, ຖົງປັກຊຳຈະຕ້ອງໄດ້ສີກອອກກ່ອນນຳເບ້ຍ ລົງຂຸມ, ຖ້າຫາກວ່າ ຮາກຫາກຍາວຈົນເກີນໄປ ຄວນຈະໄດ້ຕັດອອກ, ຫາກຕົ້ນກ້າມີງ່າຫຼາຍກວ່າ 7 ງ່າກໍ່ຕ້ອງໄດ້ຕັດອອກ ຈົ່ງໄວ້ 3-5 ງ່າ.

<u>**ການເອົາງ່າຝັງດິນ**</u>

ການນຳເອົາງ່າຝັງດິນແມ່ນ ອີກວິທີການໜຶ່ງທີ່ເໝາະສົມ ໃນການຂະຫຍາຍພັນຂອງຕິບຕີ້ ຊຶ່ງເປັນວິທີການທີ່ງ່າຍ, ປະຊາຊົນທົ່ວໄປສາມາດເຮັດໄດ້, ບໍ່ຈຳເປັນຕ້ອງໃຊ້ແຮງງານ ແລະ ທຶນຫຼາຍ, ປະຢັດເວລາ, ພາຍຫຼັງນຳເອົາໄປປູກແລ້ວເປີເຊັນ ການຕາຍມີໜ້ອຍ.

<u>**ການຄັດເລືອກງ່າ ທີ່ດີເພື່ອຝັງດິນ**</u>

ເລືອກເອົາງ່າທີ່ມີຂະໜາດໃຫຍ່ກວ່າ ຫຼື ເທົ່າກັບໄມ້ທູ່ ຫຼື ມີເສັ້ນຜ່າສູນກາງປະມານ 0.5-2 ຊມ, ເປັນງ່າທີ່ແຂງແຮງດີ, ບໍ່ເປັນພະຍາດ, ບໍ່ມີຮ່ອງຮອຍການທຳລາຍຂອງແມງໄມ້.

<u>**ການຝັງດິນ ໂດຍບໍ່ຕັດງ່າອອກຈາກຕົ້ນ**</u>

ຫຼັງຈາກທີ່ເຮົາເລືອກໄດ້ງ່າຕາມຕ້ອງການແລ້ວ, ເຮົາກໍ່ຂຸດໜ້າດິນໄກ້ໆກັບງ່າ ທີ່ເຮົາຈະທຳການເນັ້ງລົງຝັງນັ້ນ, ການຂຸດແມ່ນ ຂຸດກະວ່າພໍທີ່ຈະສາມາດຖົມງ່າທີ່ຈະເນັ້ງລົງມາຖົມ ຫຼັງຈາກນັ້ນກໍ່ເນັ້ງເອົາງ່າ ລົງມາຢຽດຕາມຮອຍຂຸດແລ້ວກໍ່ທຳການເຂ່ຍດິນຖົມ ແລະ ກໍ່ຢຽບໜ້າດິນໃຫ້ແໜ້ນກໍ່ຖືວ່າ ເປັນອັນສຳເລັດ, ລະດູທີ່ເໝາະສົມແມ່ນ ຕົ້ນລະດູຝົນ.

<u>**ການຝັງດິນ ໂດຍການຕັດງ່າອອກຈາກຕົ້ນ**</u>

ຫຼັງຈາກທີ່ເຮົາເລືອກໄດ້ງ່າຕາມຕ້ອງການແລ້ວ, ເຮົາກໍ່ຕັດເອົາງ່າດັ່ງກ່າວນັ້ນໄປຝັງດິນຕາມບ່ອນທີ່ກະກຽມໄວ້ນັ້ນ ແຕ່ຕ້ອງເປັນບ່ອນທີ່ມີດິນອຸດົມສົມບູນ ແລະ ຊຸ່ມ ແຕ່ບໍ່ຄວນຊຸ່ມຈົນເກີນໄປ ເພາະອາດຈະເຮັດໃຫ້ງ່ານັ້ນເນົ່າໄດ້, ເມື່ອນຳເອົາງ່າມາເຖິງບ່ອນທີ່ຈະຝັງດິນແລ້ວ ເຮົາກໍ່ເລີ້ມລົງມືຂຸດໜ້າດິນບ່ອນທີ່ເຮົາຈະທຳການຝັງງ່ານັ້ນ, ຂຸດກະວ່າພໍທີ່ຈະສາມາດ ຖົມງ່າທີ່ຈະຝັງນັ້ນ ຫຼັງຈາກ

ນັ້ນນໍາເອົາງ່າ ລົງມາຢຽດຕາມຮອຍຂຸດແລ້ວກໍ່ທໍາການເຂ່ຍດິນຖົມ ແລະ ກໍ່ຢຽບໜ້າດິນໃຫ້ແໜ້ນ ກໍ່ຖືວ່າ ເປັນອັນສໍາເລັດ, ລະດູທີ່ເໝາະສົມແມ່ນ ຕົ້ນລະດູຝົນ.

## ການບົວລະບັດຮັກສາ

### ການໃຫ້ນໍ້າ

ການໃຫ້ນໍ້າແມ່ນ ເພື່ອເຮັດໃຫ້ດິນມີຄວາມຊຸ່ມ, ແຕ່ບໍ່ໃຫ້ປຽກຫຼາຍເກີນໄປ ເພາະມັນອາດເຮັດໃຫ້ ງ່າຕົບຕີ່ໃນດິນນັ້ນເນົ່າຕາຍໄດ້, ການໃຫ້ນໍ້າຄວນໃຫ້ 2 ຄັ້ງຕໍ່ອາທິດ (ຄັ້ງໜຶ່ງໃນຕອນເຊົ້າ ແລະ ອີກ ຄັ້ງໜຶ່ງໃນຕອນບ່າຍ) ຖ້າຫາກວ່າ ມີຝົນຕົກແມ່ນ ບໍ່ຈໍາເປັນຕ້ອງໄດ້ໃຫ້ນໍ້າ.

### *ການກໍາຈັດວັດສະພືດ ແລະ ແມງໄມ້*



ການບົວລະບັດຮັກສາສວນຕົບຕີ່ ແລະ ຕິດຕາມພະຍາດ ຢູ່ໃນສວນ

ບາງຄັ້ງເຮົາອາດຈະຕ້ອງໄດ້ກໍາຈັດວັດສະພືດ ໃນເຂດທີ່ເຮົາຝັງງ່າ ໂດຍການຫຼົກເອົາວັດສະພືດອອກຈາກເຂດບ່ອນທີ່ເຮົາຝັງງ່ານັ້ນ, ພ້ອມທັງສັງເກດເບິ່ງພະຍາດ ແລະ ແມງໄມ້ທີ່ເກີດນັ້ນ, ຖ້າຫາກມີກໍ່ໃຫ້ກໍາຈັດ ແລະ ຫາວິທີປ້ອງກັນແຕ່ຫົວທີ.

### *ເຕັກນິກການນໍາເອົາໄປປູກ*

ຫຼັງຈາກປັກຊໍາໄດ້ 4-5 ເດືອນ ຫຼື ໜໍ່ທີ່ປົ່ງອອກມາມີ 5-7 ໃບແລ້ວ ເຮົາກໍ່ສາມາດນໍາໄປປູກໃນສວນ ໄດ້, ກ່ອນທີ່ຈະທໍາການປູກໃນສວນນັ້ນແມ່ນ ເຮົາຈະຕ້ອງໄດ້ກະກຽມແຮງງານໃຫ້ພຽງພໍ, ຕ້ອງ ໄດ້ຂຸດເອົາງ່າທີ່ຝັງໃນດິນນັ້ນຂຶ້ນມາ ແລະ ກໍ່ຕັດເປັນທ່ອນ ຊຶ່ງແຕ່ລະທ່ອນນັ້ນຕ້ອງປະກອບມີ 1-2 ໜໍ່, ຖ້າຫາກວ່າ ຮາກຫາກຍາວຈົນເກີນໄປ ກໍ່ຄວນຈະໄດ້ຕັດອອກ ເຫຼືອປະມານ 5-10 ຊມ.

## ການຂະຫຍາຍພັນ

ຕົບຕີ່ສາມາດຂະຫຍາຍພັນດ້ວຍແກ່ນ ໂດຍມີນົກ ແລະ ຄົນ ເປັນພາຫະນໍາ ເຊັ່ນ : ຄົນນໍາ ເອົາແກ່ນໄປກ້າ, ນົກກິນແກ່ນທີ່ນ້ອຍຄືກັບແກ່ນຫຍ້າ ແລ້ວໄປຂີ້ໃສ່ບ່ອນອື່ນ ຫຼັງຈາກນັ້ນ ໃນເມື່ອ ແກ່ນດັ່ງກ່າວໄດ້ພົບກັບເງື່ອນໄຂທີ່ເໝາະສົມມັນກໍ່ຈະງອກເປັນຕົ້ນຕົບຕີ່ໃນຂັ້ນຕໍ່ໄປ, ດ້ວຍການ ແຍກເຫງົ້າ ແລະ ກິ່ງງ່າ ດ້ວຍການຕັດແລ້ວນໍາໄປປັກຊໍາໃນຖົງປລາສຕິກດໍາ ແລະ ຮັກສາໄວ້ໃນ ເຮືອນຊໍາ ຫຼື ຊໍາໃສ່ໜານໂດຍກົງ.

## ແມງໄມ້ທີ່ມັກພົບເຫັນ ໃນສວນຕິບຕີ່

ແມງໄມ້ທີ່ມັກຈະພົບເຫັນ ໃນສວນຕິບຕີ່ແມ່ນ ແມງກະເບື້ອ ທີ່ມັນຈະມາວາງໄຂ່ ໃສ່ຕາມ ໃບຂອງຕິບຕີ່ ແລະ ກໍ່ຈະກາຍເປັນໂຕບົ້ງ ທີ່ກັດກິນໃບຕິບຕີ່ ເຮັດໃຫ້ຕິບຕີ່ນັ້ນ ບໍ່ງາມ ແລະ ການຈະເລີນເຕີບໂຕກໍ່ຈະບໍ່ເຕັມທີ່ເທົ່າທີ່ຄວນ.






ແມ່ງກະເບື້ອເປັນຕົ້ນກຳເນີດຂອງໄຂ່ຕາມໃບຕິບຕີ

ໄຂ່ມີສີເຫລືອງ, ເປັນເມັດນ້ອຍໆແຕ່ມີຈຳນວນຫລາຍ (ຫລາຍກວ່າຮ້ອຍຫນ່ວຍຕໍ່ໃບ).

ໄຂ່ຈະຕິດຢູ່ທາງດ້ານໃນຂອງໃບຕິບຕີ. ເພື່ອຢາກຮູ້ວ່າຕົ້ນຕິບຕີຂອງເຮົາມີການກໍ່ຕົວຂອງໄຂ່ແມງກະເບື້ອ ຕ້ອງໄດ້ເບິ່ງທາງດ້ານໃນຂອງໃບຈຶ່ງສາມາດເຫັນໄດ້.





ໄຂ່ແມງກະເບື້ອຈະກັບກາຍເປັນຫນອນ (ບົ້ງ) ອ່ອນ ຊຶ່ງຫນອນດັ່ງກ່າວຈະເກາະກັນເປັນກຸ່ມກ້ອນຕາມໃບຂອງຕົ້ນຕິບຕີ. ໃນຊ່ວງໄລຍະນີ້ ເປັນຊ່ວງທີ່ເຫມາະສົມທີ່ສຸດໃນການກຳຈັດຫນອນຈຳພວກນີ້ ເພາະເປັນຊ່ວງທີ່ພວກຫນອນກຳລັງຜັກຕົວ ແລະ ຢູ່ເປັນກຸ່ມກ້ອນ



ໃນເມື່ອຫນອນກາຍເປັນບົ້ງແກ່, ກໍ່ເປັນການຍາກທີ່ຈະກໍາຈັດພວກມັນໄດ້ຢ່າງມີປະສິດທິຜົນ ແລະ ຄວບຄຸມປະຊາກອນຂອງພວກມັນໄດ້. ສານເຄມີສາມາດກໍາຈັດພວກບົ້ງນີ້ໄດ້ ແຕ່ມີຄວາມອັນຕະລາຍຫລາຍຕໍ່ສຸຂະພາບ, ຖ້າຜູ້ປະຕິບັດບໍ່ມີການປ້ອງກັນທີ່ຈໍາເປັນ (ຊຸດປ້ອງກັນ,ຫນ້າກາກ, ເກີບໂບກ, ຊົບມື ແລະ ອື່ນໆ).

ໂດຍສ່ວນຫລາຍແລ້ວ, ຖ້າພົບເຫັນໃບຕົບຕີຮ່ໍາເຂົ້າລັກສະນະນີ້, ມັນສັນຍານເຕື່ອນວ່າເລີ້ມມີການຄຸກຄາມຈາກພວກຫນອນ.

ຄວນປະຕິບັດດ້ວຍການເດັດເກັບໃບກໍ້ຮ່ໍາດັ່ງກ່າວນີ້ອອກ ແລະ ນໍາໄປຈູດ ຫລື ຝັງດິນ ເພື່ອຫລີກລ້ຽງການແຜ່ຂະຫຍາຍຂອງພວກຫນອນ.







# ການປ້ອງກັນ ແລະ ກຳຈັດ

## ການປ້ອງກັນ

ເຮົາສາມາດປ້ອງກັນໄດ້ໂດຍ ການຈູດຂີ້ເຫຍື້ອ ໃນບໍລິເວນອ້ອມຂ້າງສວນ ຂອງເຮົາເປັນ ປະຈຳ ໂດຍສະເພາະ ໃນຊ່ວງທີ່ເຮົາສັງເກດເຫັນວ່າ ມີແມງກະເບື້ອມາປາກົດຢູ່ໃນສວນຂອງເຮົາ ເປັນຈຳນວນຫຼາຍ ການຈູດຕ້ອງຈູດໃສ່ຕົ້ນລົມ ເພື່ອໃຫ້ຄວນມີການກະຈາຍໄປທົ່ວສວນ ເພື່ອໃຫ້ ແມງກະເບື້ອນັ້ນຂີວ ແລະ ບິນໜີໄປບ່ອນອື່ນ.

ປູກຕົ້ນສີໄຄ ຫຼື ຕົ້ນໄມ້ທີ່ມີກິ່ນຂີວ ອ້ອມສວນໄວ້ ກໍ່ເປັນອີກວິທີໜຶ່ງ ທີ່ຊ່ວຍປ້ອງກັນສວນ ຈາກແມງໄມ້ສັດຕູພືດໄດ້.

## ການກຳຈັດໂຕບົ້ງ

ຖ້າຫາກມີໂຕບົ້ງປາກົດຢູ່ໃນສວນ (ຕາມໃບຂອງຕົ້ນຕົບຕີ) ເຮົາກໍ່ສາມາດກຳຈັດອອກຈາກ ສວນໄດ້ ໂດຍການເລາະເກັບ ແລະ ຂ້າໂຕບົ້ງນັ້ນ ອອກຈາກສວນເປັນປະຈຳ ຫຼື ຈະເກັບໃສ່ຖົງຢາງ ແລ້ວນຳໄປເກືອເປັດໄກ່ ຢູ່ບ້ານກໍຍິ່ງເປັນການດີ.

ການກຳຈັດໂຕບົ້ງທີ່ມີປະສິດຕິພາບ ແລະໄວນັ້ນແມ່ນ ເຮົາຄວນກຳກັດແຕ່ໄລຍະ ຍັງເປັນ ໄຂ່ ຫຼື ໂຕບົ້ງຍັງນ້ອຍ, ເພາະວ່າ ໄລຍະນີ້ ພວກມັນຈະອາໃສຢູ່ກ້ອງໃບ ເປັນແຜນຊຶ່ງ ມີຫຼາຍສິບໂຕ ອາໃສຢູ່ຮ່ວມກັນ, ພຽງແຕ່ເຮົາເດັດເອົາໃບ ທີ່ມີໄຂ່ ຫຼື ໂຕບົ້ງ ມາຍ່ອງຖິ້ມກໍ່ເປັນອັນສຳເລັດແລ້ວ, ການກຳຈັດໃນໄລຍະນີ້ ມັນຈະເຮັດໃຫ້ເຮົາສາມາດປະຢັດເວລາ, ວ່ອງໄວ ແລະໄດ້ຮັບຜົນດີນຳອີກ ດ້ວຍ.

ເຮົາສາມາດກຳຈັດໂຕບົ້ງ ທີ່ຍັງອ່ອນໄດ້ ໂດຍການນຳເອົາແຟບ (ແອດແທກ) ມາປະສົມນ້ຳ ໃນອັດຕາສ່ວນ ແຟບ 100 ກຼາມ, ປະສົມນ້ຳສະອາດ 10 ລິດ ແລ້ວສີດໃສ່ໂຕບົ້ງ ຫຼື ບ່ອນທີ່ມີໂຕບົ້ງ ອາໃສ່ຢູ່ ໃນຊ່ວງທີ່ມີແດດ ໃນຕອນເຊົ້າ ຫາ 15 ໂມງແລ້ງ, ວິທີນີ້ເຮົາສາມາດສີດຂ້າໂຕມົດໄດ້ ເຊັ່ນ ດຽວກັນ.

# ການເກັບກ່ຽວ

ເປືອກຕົບຕີ້ສາມາດເກັບກ່ຽວໄດ້ຕະຫຼອດປີ ແຕ່ສ່ວນຫຼາຍແລ້ວແມ່ນ ຈະນິຍົມເກັບກ່ຽວ ໃນ ຊ່ວງລະດູແລ້ງ (ເດືອນ 11-4) ໂດຍສະເພາະແມ່ນ ໃນຊ່ວງເດືອນ 1-2, ຊຶ່ງຈະອາໃສແສງແດດ ໃນ ການຕາກໃຫ້ແຫ້ງກ່ອນການຂາຍ.

ວິທີການເກັບກ່ຽວຕົບຕີ ທີ່ຖືກຕ້ອງແມ່ນ ຈະທຳການເກັບກ່ຽວໂດຍການຕັດລຳຕົ້ນສູງ ຈາກໜ້າດິນ ປະມານ 5-10 ຊມ ແລະ ຈົ່ງໄວ້ 1-2 ແໜງຕໍ່ຕົ້ນບໍ່ໃຫ້ຕັດໝົດ ຊຶ່ງອາດຈະເຮັດໃຫ້

ຕົບຕີ່ປົ່ງແໜງໃໝ່ຊັກຊ້າ, ຫຼັງຈາກທີ່ຕັດແລ້ວເຮົາກໍ່ນຳອອກຈາກສວນກັບສູ່ບ້ານ ຫຼື ອາດຈະຕັດ ແລະ ປອກເປືອກອອກ ຈາກແກນໄມ້ແລ້ວແພ່ອອກຢູ່ສວນເລີຍກໍ່ໄດ້, ຊຶ່ງຄວນທຳການຕັດເປັນທ່ອນ ແຕ່ລະທ່ອນຍາວ ປະມານ 1-2 ແມັດ, ເພື່ອເປັນການງ່າຍແກ່ການຂົນສົ່ງ ແລ້ວກໍ່ນຳເອົາເປືອກ ທີ່ຜ່ານການປອກນັ້ນ ໄປຕາກແດດ ຫຼື ເຮັດໃຫ້ແຫ້ງ ໃນຂັ້ນຕໍ່ໄປ, ເຮົາຈະສາມາດເກັບກ່ຽວຕົບຕີ່ໄດ້ ພາຍຫຼັງປູກໄດ້ 3 ປີ ຫຼື ມີເປືອກຂອງລຳຕົ້ນໜາ ປະມານ 0.5-1 ຊມ, ຫຼັງຈາກນັ້ນຕົ້ນຕົບຕີ່ກໍ່ຈະປົ່ງແໜງໃໝ່ອອກມາ ຊຶ່ງອີກ 3 ປີຂ້າງໜ້າແມ່ນ ເຮົາຈະສາມາດເກັບກ່ຽວໄດ້ອີກ.



ພາຍໃຕ້ເງື່ອນໄຂທຳມະຊາດ.

ຕົບຕີ່ໜຶ່ງເຫງົ້າ ສາມາດປົ່ງໜໍ່ໄດ້ 3-5 ໜໍ່ຕໍ່ປີ ແລະ ຈະມີ ຈຳນວນແໜງທັງໝົດ 7-10 ແໜງຕໍ່ເຫງົ້າ ຫຼັງຈາກ ທີ່ເປືອກໄດ້ຖືກປອກອອກມາຈາກລຳຕົ້ນແລ້ວ ຈະຕ້ອງໄດ້ທຳການຕາກແດດ ໃຫ້ແຫ້ງ ຫຼື ມີຄວາມຊຸ່ມຢູ່ລະຫວ່າງ 12-15%, ແລ້ວສີກໃຫ້ເປັນເສັ້ນນ້ອຍໆເພື່ອ ສະດວກໃນ ການເກັບຮັກສາ ແລະ ຂົນສົ່ງ ຫຼັງຈາກນັ້ນກໍ່ເກັບຮັກສາໄວ້ໃນບ່ອນທີ່ມີອາກາດລ່ວງດີ, ແຕ່ບໍ່ໃຫ້ຖືກ ນ້ຳ ຫຼື ຄວາມຊຸ່ມ. ໃນປະຈຸບັນປະຊາຊົນໄດ້ທຳການເກັບຕົບຕີ່ແບບດັບສູນເປັນຕົ້ນແມ່ນ ມີການຕັດຕົ້ນ, ປອກ ເປືອກ ແລະ ກໍ່ຂຸດເອົາທັງຮາກ ແລະ ເຫງົ້າພ້ອມ, ວິທີການເກັບກ່ຽວແບບນີ້ແມ່ນ ຈະບໍ່ມີຄວາມຍືນຍົງເຮັດໃຫ້ຕົບຕີ່ນັບມື້ນັບຫາຍາກ ແລະ ຈະນຳໄປສູ່ການດັບສູນໃນອະນາຄົດ ຫາກບໍ່ມີການປັງປຸງວິທີການເກັບກູ້ຄືນໃໝ່, ພ້ອມທັງຕ້ອງໄດ້ປູກທົດແທນ ຊຶ່ງວ່າ ຕົບຕີ່ສາມາດຂະຫຍາຍພັນໄດ້ດີ ແລະ ປູກງ່າຍ.

## ການນຳໃຊ້

ພາຍໃນປະເທດລາວຍັງບໍ່ທັນມີການປຸງແຕ່ງເທື່ອ, ເປືອກຕົ້ນຕົບຕີ່ແມ່ນ ໄດ້ທຳການສົ່ງ ອອກໄປຂາຍຢູ່ປະເທດຈີນ ແລະ ອີງຕາມ ການສຳພາດພໍ່ຄ້າຄົນຈີນ ເຮົາພຽງແຕ່ຮູ້ຂ່າວແບບຜິວ ເຜີນວ່າ ຕົບຕີ່ແມ່ນ ໄດ້ນຳໄປເປັນສ່ວນປະກອບໃນການຜະລິດທູບ, ຢາຂ້າຍຸງ ແລະ ເຮັດຢາງກາວ.

ໃບຕົບຕີ່ແມ່ນ ໃຊ້ເປັນອາຫານສັດໄດ້ດີ ໂດຍສະເພາະແມ່ນ ອາຫານງົວ, ຄວາຍ, ແບ້ ແລະ ອື່ນໆ ຊຶ່ງສັດມັກກິນໃບສົດໆ ຂອງຕົບຕີ່.

ລຳຕົ້ນທີ່ເຮົາປອກເປືອກອອກແລ້ວນັ້ນແມ່ນ ສາມາດນຳມາ ໃຊ້ເປັນຟືນດັງໄຟ ເພື່ອຮັບໃຊ້ການແຕ່ງກິນພາຍໃນຄອບຄົວໄດ້ອີກດ້ວຍ ແຕ່ຕ້ອງຕາກແດດໃຫ້ແຫ້ງເສຍກ່ອນ, ຊຶ່ງຈະເປັນການຊ່ວຍບໍ່ໃຫ້ປະຊາຊົນໄປຫາຕັດໄມ້ຕາມປ່າ ເພື່ອມາເຮັດຟືນແຕ່ງກິນ ແລະ ກໍ່ເພື່ອປະຕິບັດຕາມແນວທາງນະໂຍບາຍ ຂອງພັກລັດ ທີ່ຢຸດຕິການຖາງປ່າເຮັດໄຮ່ລິ ເທື່ອລະກ້າວນັ້ນ.

## ການຕະຫຼາດ

ການເກັບຊື້ຕົບຕີ່ສ່ວນໃຫຍ່ແມ່ນ ມີພໍ່ຄ້າຄົນກາງເກັບຊື້ແລ້ວ ນຳໄປຂາຍຕໍ່ໃຫ້ພໍ່ຄ້າຈີນ (ແຂວງຜົ້ງສາລີ, ອຸດົມໄຊ ແລະ ແຂວງ ຫຼວງນ້ຳທາ) ການຊື້ແມ່ນ ຊື້ຕົບຕີ່ແຫ້ງ ສຳລັບລາຄາແມ່ນ ບໍ່ຈຳກັດ ແລະ ມີການປ່ຽນແປງລາຄາຕາມອັດຕາແລກປ່ຽນເງິນຈີນ (ຢວນ) ຂອງແຕ່ລະໄລຍະ, ໃນປີ 2004 ພໍ່ຄ້າແຂວງຜົ້ງສາລີ ໄດ້ຂາຍຕົບຕີ່ ແຫ້ງໃຫ້ແກ່ພໍ່ຄ້າຄົນຈີນ ໃນລາຄາ 3 500- 4000 ກີບ/ກລ.









ຂະບວນການເກັບຊື້ ແລະ ການຂາຍຕົບຕີຂອງປະຊາຊົນຢູ່ບ່ອນຕ່າງໆຂອງເມືອງຜົ້ງສາລີ